ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 112 /ລບ
ນະຄອນຫຼວງວຽງຈັນ, ວັນທີ 30 / 04 / 26

ດຳລັດ
ວ່າດ້ວຍ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 1190/ກງ, ລົງວັນທີ 31 ມີນາ 2026.

ລັດຖະບານ ອອກດຳລັດ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ໃນການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຍົກສູງສະຕິເຄົາລົບຕື່ນຕົວ, ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ມາດຕາ 2 ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຊັບສິນຂອງລັດ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ມາດຕະການ ທີ່ນຳໃຊ້ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ດ້ວຍການສຶກສາອົບຮົມ, ການຍຶດ ເຄື່ອງມື, ວັດຖຸປະກອນ, ຍານພາຫະນະ, ການ ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ສັນຍາ ເຊົ່າ ຫຼື ສຳປະທານ.

ມາດຕາ 3 ຫຼັກການກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນສູງ;

4. ຮັບປະກັນການປະຕິບັດອັດຕາຄ່າປັບໃໝ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

5. ຮັບປະກັນການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ມາດຕາ 4 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຊັບສິນຂອງລັດ ຢູ່ ສປປ ລາວ.

ໝວດທີ 2
ການປັບໃໝ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ

ມາດຕາ 5 ການບໍ່ປະຕິບັດພັນທະຄ່າ ເຊົ່າ ຫຼື ຄ່າສຳປະທານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ດຳເນີນກິດຈະການ ທີ່ບໍ່ປະຕິບັດພັນທະ ກ່ຽວກັບການ ເຊົ່າ ຫຼື ສຳປະທານ ຊັບສິນຂອງລັດ ຈະຖືກປັບໃໝ ຕາມແຕ່ລະອັດຕາສ່ວນຂອງຄ່າ ເຊົ່າ ຫຼື ສຳປະທານ ທີ່ຍັງຄ້າງຊຳລະ ດັ່ງນີ້:

1. ສິບສ່ວນຮ້ອຍ (10%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີໜຶ່ງ;
2. ຊາວສ່ວນຮ້ອຍ (20%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີສອງ;
3. ສາມສິບສ່ວນຮ້ອຍ (30%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີສາມ ຂຶ້ນໄປ.

ກໍລະນີການປັບໃໝ ຫາກໄດ້ກຳນົດໄວ້ໃນສັນຍາ ເຊົ່າ ຫຼື ສຳປະທານ, ລະບຽບການທີ່ກ່ຽວຂ້ອງ ໃຫ້ປະຕິບັດຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ແລະ ລະບຽບການດັ່ງກ່າວ. ໃນກໍລະນີບໍ່ໄດ້ມີການກຳນົດ ອັດຕາປັບໃໝ ໃນສັນຍາ ເຊົ່າ ຫຼື ສຳປະທານ, ລະບຽບການທີ່ກ່ຽວຂ້ອງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕາ 6 ການບໍ່ປະຕິບັດພັນທະຄ່າຊົດພະຍາກອນທຳມະຊາດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ດຳເນີນກິດຈະການ ທີ່ບໍ່ປະຕິບັດພັນທະ ຄ່າຊົດພະຍາກອນທຳມະຊາດ ຫຼື ບໍ່ປະຕິບັດພັນທະຕາມກຳນົດເວລາ ຈະຖືກປະຕິບັດມາດຕະການປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ພັນທະ ຄ່າຊົດພະຍາກອນແຮ່ທາດ ແລະ ຄ່າຊົດພະຍາກອນແຮ່ທາດຮັບໃຊ້ກິດຈະການກໍ່ສ້າງ ຈະຖືກປັບໃໝ ຕາມມູນຄ່າຊົດພະຍາກອນ ທີ່ຍັງຄ້າງຊຳລະ:

1.1 ສິບສ່ວນຮ້ອຍ (10%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີໜຶ່ງ;

1.2 ຊາວສ່ວນຮ້ອຍ (20%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີສອງ;

1.3 ສາມສິບສ່ວນຮ້ອຍ (30%) ຕໍ່ເດືອນ ສຳລັບການລະເມີດ ຄັ້ງທີສາມ.

2. ພັນທະ ຄ່າຊົດພະຍາກອນປ່າໄມ້ ແລະ ເຄື່ອງປ່າຂອງດົງ ຈະຖືກປັບໃໝ ຕາມມູນຄ່າ ຄ່າຊົດພະຍາກອນ ທີ່ຍັງຄ້າງຊຳລະ:

2.1 ສອງຮ້ອຍສ່ວນຮ້ອຍ (200%) ສຳລັບການລະເມີດ ຄັ້ງທີໜຶ່ງ;

2.2 ສາມຮ້ອຍສ່ວນຮ້ອຍ (300%) ສຳລັບການລະເມີດ ຄັ້ງທີສອງ;

2.3 ສີ່ຮ້ອຍສ່ວນຮ້ອຍ (400%) ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

3. ພັນທະ ຄ່າຊົດພະຍາກອນນ້ຳທຳມະຊາດ ແຕ່ລະກິດຈະການຜະລິດ ແລະ ການບໍລິການ ຈະຖືກປັບໃໝ ຕາມມູນຄ່າ ຄ່າຊົດພະຍາກອນ ທີ່ຍັງຄ້າງຊຳລະ:

3.1 ສອງຮ້ອຍສ່ວນຮ້ອຍ (200%) ສຳລັບການລະເມີດ ຄັ້ງທີໜຶ່ງ;

3.2 ສາມຮ້ອຍສ່ວນຮ້ອຍ (300%) ສຳລັບການລະເມີດ ຄັ້ງທີສອງ;

3.3 ສີ່ຮ້ອຍສ່ວນຮ້ອຍ (400%) ສຳລັບການລະເມີດ ຄັ້ງທີສາມ ຂຶ້ນໄປ.

4. ການແຈ້ງມອບຄ່າຊັບພະຍາກອນທຳມະຊາດ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ຕາມມູນຄ່າຊັບພະຍາກອນທີ່ລະເມີດ ເປັນຕົ້ນ ການແຈ້ງບໍ່ຖືກຕ້ອງຕາມ ຈຳນວນ, ບໍລິມາດ, ຄຸນນະພາບ, ປະເພດ, ຊະນິດ:

4.1 ສອງຮ້ອຍສ່ວນຮ້ອຍ (200%) ສອງເທົ່າ ສຳລັບການລະເມີດ ຄັ້ງທີໜຶ່ງ;

4.2 ສາມຮ້ອຍສ່ວນຮ້ອຍ (300%) ສາມເທົ່າ ສຳລັບການລະເມີດ ຄັ້ງທີສອງ;

4.3 ສີ່ຮ້ອຍສ່ວນຮ້ອຍ (400%) ສຳລັບການລະເມີດ ຄັ້ງທີສາມ ຂຶ້ນໄປ.

ມາດຕາ 7 ການນຳໃຊ້ຊັບສິນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ຊັບສິນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ ທີ່ໄດ້ກໍ່ຄວາມເສຍຫາຍ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດ ຄັ້ງທີໜຶ່ງ;

2. ສອງຮ້ອຍສ່ວນຮ້ອຍ (200%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດ ຄັ້ງທີສອງ ຂຶ້ນໄປ.

ມາດຕາ 8 ການເອົາຊັບສິນຂອງລັດ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ໄດ້ເອົາຊັບສິນດັ່ງກ່າວ ເປັນຕົ້ນ ການເອົາຊັບສິນຂອງລັດມາເປັນກຳມະສິດສ່ວນຕົວ, ແລກປ່ຽນ, ສັບປ່ຽນ, ມອບ, ໂອນ, ປະກອບເປັນຮຸ້ນ ຫຼື ຄ้ຳປະກັນ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ ຈະຖືກປັບໃໝ ດັ່ງນີ້:

1. ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າຊັບສິນ ສຳລັບການລະເມີດຄັ້ງທີໜຶ່ງ;

2. ສອງຮ້ອຍສ່ວນຮ້ອຍ (200%) ຂອງມູນຄ່າຊັບສິນ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

ມາດຕາ 9 ການຊື້ ຂາຍ, ການເຄື່ອນຍ້າຍ ຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ດຳເນີນກິດຈະການ ທີ່ ຊື້ ຂາຍ, ເຄື່ອນຍ້າຍ ຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຊັບສິນຂອງລັດ ປະເພດ ວັດຖຸປະກອນ, ຍານພາຫະນະ:

1.1 ຊາວສ່ວນຮ້ອຍ (20%) ຂອງມູນຄ່າຊັບສິນ ສຳລັບການລະເມີດ ຄັ້ງທີໜຶ່ງ;

1.2 ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າຊັບສິນ ສຳລັບການລະເມີດ ຄັ້ງທີສອງ.

2. ຊັບສິນຂອງລັດ ປະເພດຊັບພະຍາກອນທຳມະຊາດ ແລະ ທີ່ດິນຂອງລັດ:

2.1 ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າຊັບສິນ ສຳລັບການລະເມີດ ຄັ້ງທີໜຶ່ງ;

2.2 ສອງຮ້ອຍສ່ວນຮ້ອຍ (200%) ຂອງມູນຄ່າຊັບສິນ ສຳລັບການລະເມີດ ຄັ້ງທີສອງ ຂຶ້ນໄປ.

ມາດຕາ 10 ການເຮັດໃຫ້ຊັບສິນຂອງລັດ ເປ່ເພ, ເສຍຫາຍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ເຮັດໃຫ້ຊັບສິນຂອງລັດ ເປ່ເພ, ເສຍຫາຍ ຈະຖືກປັບໃໝ ດັ່ງນີ້:

1. ການທຳລາຍຊັບສິນຂອງລັດ ປະເພດອາຄານ ແລະ ສິ່ງກໍ່ສ້າງ, ຍານພາຫະນະ, ວັດຖຸອຸປະກອນ:

1.1 ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;

1.2 ສອງຮ້ອຍສ່ວນຮ້ອຍ (200%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

2. ການທຳລາຍຊັບສິນຂອງລັດ ປະເພດ ຊັບພະຍາກອນທຳມະຊາດ:

2.1 ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;

2.2 ສອງຮ້ອຍສ່ວນຮ້ອຍ (200%) ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

ໃນກໍລະນີການເຮັດໃຫ້ຊັບສິນຂອງລັດດັ່ງກ່າວ ເປ່ເພ, ເສຍຫາຍ ຫາກບໍ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ໝວດທີ 3
ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ

ມາດຕາ 11 ມາດຕະການອື່ນ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ນອກຈາກຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ແລ້ວ ຍັງຖືກນຳໃຊ້ມາດຕະການ ສຶກສາອົບຮົມ ດ້ວຍການ ກ່າວເຕືອນ, ເຮັດບົດບັນທຶກ, ຍຶດຊັບທີ່ກ່ຽວຂ້ອງ ເປັນຕົ້ນ ເຄື່ອງມື, ວັດຖຸປະກອນ, ຍານພາຫະນະ ທີ່ນຳໃຊ້ເຂົ້າໃນການລະເມີດ ພ້ອມທັງໃຫ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ຊັບສິນຂອງລັດ ທຸກປະເພດ ທີ່ກວດພົບເຫັນຈາກ ການລະເມີດກົດໝາຍ ແລະ ລະບຽບການ ຕ້ອງຖືກ ຖອນຄືນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 12 ມາດຕະການອື່ນ ຕໍ່ຜູ້ດຳເນີນກິດຈະການ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການ ກ່ຽວກັບຊັບສິນຂອງລັດ ນອກຈາກຈະຖືກ ປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ແລ້ວ ຍັງຕ້ອງຖືກນຳໃຊ້ມາດຕະການ ສຶກສາອົບຮົມ ດ້ວຍການ ກ່າວເຕືອນ, ເຮັດບົດບັນທຶກ, ຍຶດຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ ພ້ອມທັງ ໃຊ້ແທນ ຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ນອກຈາກ ຖືກນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຜູ້ດຳເນີນກິດຈະການ ຍັງຕ້ອງຖືກນຳໃຊ້ມາດຕະການ ໂຈະໃບອະນຸຍາດດຳເນີນທຸລະກິດ ສຳລັບການລະເມີດ ຄັ້ງທີສອງ.

ໃນກໍລະນີ ລະເມີດຄັ້ງທີສາມ ຜູ້ດຳເນີນກິດຈະການຕ້ອງຖືກນຳໃຊ້ມາດຕະການ ຖອນໃບອະນຸຍາດດຳ ເນີນທຸລະກິດ ຫຼື ຍົກເລີກສັນຍາ ເຊົ່າ ຫຼື ສຳປະທານ ຕາມແຕ່ລະກໍລະນີ.

ໝວດທີ 4
ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ມາດຕາ 13 ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ

ຂະແໜງການ ການເງິນ ເປັນຜູ້ຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ໂດຍການປະສານສົມທົບ ກັບຂະແໜງການ, ອົງການ ປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ໂຄສະນາເຜີຍແຜ່ຢ່າງທົ່ວເຖິງ ເພື່ອໃຫ້ສັງຄົມ ມີສ່ວນ ຮ່ວມໃນການປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 14 ສິດ ແລະ ໜ້າທີ່ ຂອງຂະແໜງການ ການເງິນ

ຂະແໜງການ ການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ;
2. ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ຊັບສິນຂອງລັດ;
3. ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນ ການຈັດຕັ້ງປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ;

4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດກ່ຽວກັບການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຊັບສິນຂອງລັດ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ໝວດທີ 5
ການຄຸ້ມຄອງ ຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ, ການຊຳລະ ແລະ ການນຳໃຊ້ເງິນປັບໃໝ

ມາດຕາ 15 ການຄຸ້ມຄອງ ຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ ທີ່ຖືກຍຶດ

ຂະແໜງການ ການເງິນ ເປັນຜູ້ຄຸ້ມຄອງ ຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ ທີ່ຖືກຍຶດ ຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ ໂດຍມີການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ໃນໄລຍະທີ່ເກັບຮັກສາຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ ທີ່ຖືກຍຶດນັ້ນ ບໍ່ອະນຸຍາດໃຫ້ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ນຳໃຊ້.

ກະຊວງການເງິນ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງຊັບທີ່ກ່ຽວຂ້ອງ ແລະ ໝາກຜົນທີ່ໄດ້ຈາກຊັບສິນຂອງລັດ ທີ່ຖືກຍຶດ.

ມາດຕາ 16 ການຊຳລະເງິນຄ່າປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຕ້ອງຊຳລະເງິນຄ່າປັບໃໝ ຕາມການສັ່ງມອບຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໂດຍຜ່ານລະບົບທະນາຄານ.

ສຳລັບ ຂັ້ນຕອນ ແລະ ວິທີການຊຳລະຄ່າປັບໃໝ ກະຊວງການເງິນ ເປັນຜູ້ກຳນົດລະບຽບການ ຕ່າງຫາກ.

ມາດຕາ 17 ການນຳໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ

ເງິນທີ່ໄດ້ຈາກການປັບໃໝ ຕາມດຳລັດສະບັບນີ້ ຫົກສິບສ່ວນຮ້ອຍ (60%) ໃຫ້ມອບເຂົ້າງົບປະມານແຫ່ງລັດ, ສ່ວນເງິນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ນຳໃຊ້ເຂົ້າໃນວຽກງານຂອງລັດຖະການຄຸ້ມຄອງຊັບສິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງດຳລັດສະບັບນີ້.

ມາດຕາ 18 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ

ເງິນທີ່ໄດ້ຈາກການປັບໃໝ ສາມາດນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ;

2. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໃນການປະຕິບັດ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ;

3. ຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

4. ຕິດຕາມ, ກວດກາ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ;

5. ເປົ້າໝາຍອື່ນ ກ່ຽວກັບວຽກງານຊັບສິນຂອງລັດ.

ກະຊວງການເງິນ ເປັນຜູ້ກຳນົດລະບຽບການ ກ່ຽວກັບການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໃນການປະຕິບັດການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຊັບສິນຂອງລັດ.

ໝວດທີ 6
ບົດບັນຍັດສຸດທ້າຍ

ມາດຕາ 19 ການຈັດຕັ້ງປະຕິບັດ

ກະຊວງການເງິນ ເປັນເຈົ້າການຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມກົດໝາຍສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 20 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 16 ມິຖຸນາ 2026 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ